ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ: 5079-[illegible]/ກປ

ນະຄອນຫຼວງວຽງຈັນ, ວັນທີ 24 NOV 2022

# ຂໍ້ຕົກລົງ
## ວ່າດ້ວຍການເປີດຂະບວນການແຂ່ງຂັນ-ຍ້ອງຍໍ
## ພາຍໃຕ້ຄຳຂວັນ "ຮັກຊາດ ແລະ ພັດທະນາ" ແຕ່ປີ 2021-2025

- ອີງຕາມ ມະຕິຕົກລົງ ຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີວຽກງານແຂ່ງຂັນ-ຍ້ອງຍໍໃນໄລຍະໃໝ່ ສະບັບເລກທີ 01/ກມສພ, ລົງວັນທີ 07 ມັງກອນ 2010;
- ອີງຕາມ ລັດຖະດຳລັດ ຂອງປະທານປະເທດ ວ່າດ້ວຍການເປີດຂະບວນການແຂ່ງຂັນ-ຍ້ອງຍໍ ທົ່ວປະເທດໃນໄລຍະໃໝ່ ສະບັບເລກທີ 011/ປປທ, ລົງວັນທີ 20 ມັງກອນ 2010;
- ອີງຕາມ ດຳລັດ ຂອງລັດຖະບານ ວ່າດ້ວຍການແຂ່ງຂັນ-ຍ້ອງຍໍ ສະບັບເລກທີ 116/ລບ, ລົງວັນທີ 22 ເມສາ 2019;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ແຈ້ງການຂອງ ຄະນະຊີ້ນຳລະດັບຊາດ ກ່ຽວກັບ ການແຂ່ງຂັນ ແລະ ຍ້ອງຍໍຮັກຊາດ ແລະ ພັດທະນາ ສະບັບເລກທີ 01/ຄຊຂຍ, ລົງວັນທີ 31 ຕຸລາ 2022.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດເນື້ອໃນຂໍ້ແຂ່ງຂັນ ແລະ ວິທີຈັດຕັ້ງ ການເປີດຂະບວນການແຂ່ງຂັນ-ຍ້ອງຍໍ ພາຍໃຕ້ຄຳຂວັນ **"ຮັກຊາດ ແລະ ພັດທະນາ"** ເພື່ອເປັນບ່ອນອີງໃຫ້ແກ່ ຫ້ອງການ, ບັນດາກົມ, ບັນດາສະຖາບັນ, ບັນດາສູນ, ກອງທຶນ, ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້, ໂຮງຮຽນຊົນລະປະທານ ຊັ້ນສູງ ທ່າງ່ອນ ທີ່ຂຶ້ນກັບ ກະຊວງກະສິກຳ ແລະ ປ່າໄມ້ ໃນການວາງແຜນ, ກຳນົດເປົ້າໝາຍໃນການປະຕິບັດໜ້າທີ່ວຽກງານວິຊາສະເພາະຂອງຕົນ ແລະ ເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ, ພ້ອມນັ້ນເພື່ອເຮັດໃຫ້ວຽກງານແຂ່ງຂັນ ແລະ ຍ້ອງຍໍ ເຂົ້າສູ່ທຸກຂົງເຂດວຽກງານຢ່າງຕັ້ງໜ້າ ແລະ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ, ທັງເປັນການກະຕຸກຊຸກຍູ້ ປຸກລະດົມ ພະນັກງານ-ລັດຖະກອນ ທົ່ວກະຊວງກະສິກຳ ແລະ ປ່າໄມ້ ເຂົ້າຮ່ວມຢ່າງແຂງແຮງ ແລະ ກວ້າງຂວາງ ພ້ອມທັງແຂ່ງຂັນກັນສ້າງຂະບວນການພັດທະນາວຽກງານກະສິກຳ ແລະ ປ່າໄມ້ ໃຫ້ເປັນຂະບວນຟົດຟື້ນ, ຕໍ່ເນື່ອງ ແລະ ມີປະສິດທິຜົນ.

ມາດຕາ 2 ເນື້ອໃນການແຂ່ງຂັນ-ຍ້ອງຍໍ 3 ຂະບວນການ 4 ເປົ້າໝາຍ.

2.1. 3 ເນື້ອໃນ:

1. ວຽກດີ

- ປະຕິບັດວຽກງານໄດ້ຕາມຄາດໝາຍ ຫຼື ລື່ນຄາດໝາຍທີ່ວາງໄວ້ ໂດຍມີຕົວຊີ້ວັດຢັ້ງຢືນຜົນສຳເລັດ;
- ມີປະສິດທິພາບ ແລະ ປະສິດທິຜົນໃນການເຄື່ອນໄຫວວຽກງານໃນທົ່ວຂະແໜງກະສິກຳ ແລະ ປ່າໄມ້.

2. ພະນັກງານໜັກແໜ້ນ

- ຮັກລະບອບປະຊາທິປະໄຕປະຊາຊົນ, ຮັກມູນເຊື້ອຂອງຊາດ, ຮັກວັດທະນະທຳ-ຮີດຄອງປະເພນີອັນດີງາມຂອງຊາດ;
- ມີທັດສະນະການເມືອງໜັກແໜ້ນ, ອຸດົມການທີ່ຖືກຕ້ອງ, ມີສະຕິຊາດ, ສະຕິເອກະລາດ;
- ສູ້ຊົນພັດທະນາຕົນເອງ ໃຫ້ມີຄວາມຮູ້, ຄວາມສາມາດເກັ່ງສະເພາະດ້ານ, ກຳແໜ້ນ ແລະ ຜັນຂະຫຍາຍແນວທາງແຜນນະໂຍບາຍຂອງພັກ-ລັດ ໃຫ້ເປັນແຜນການ, ແຜນງານ, ໂຄງການ ແລະ ການຄວບຄຸມບັນຊາປະຕິບັດຕົວຈິງ, ຄວາມເດັດຂາດໃນການແກ້ໄຂບັນຫາ ແລະ ປະກົດການຫຍໍ້ທໍ້ຕ່າງໆ ແລະ ມີຈັນຍາບັນຕໍ່ວິຊາຊີບຂອງຕົນ;
- ແບບແຜນວິທີເຮັດວຽກ: ປະຕິບັດຫຼັກການລວມສູນປະຊາທິປະໄຕ, ເສີມຂະຫຍາຍຫົວຄິດປະດິດສ້າງຂອງໝູ່ຄະນະ, ຂອງມະຫາຊົນ, ລົງຕິດແທດກັບຕົວຈິງ, ມີສະຕິໃນການເຄົາລົບ ແລະ ປະຕິບັດມະຕິ-ຄຳສັ່ງຂອງຂັ້ນເທິງ ແລະ ໝູ່ຄະນະ;
- ພະນັກງານ ຕ້ອງປະຕິບັດການທັນທິດລົງຮາກຖານ ແລະ ການລົງຕິດແທດກັບຕົວຈິງ;
- ມີທັດສະນະມະຫາຊົນ, ຄວາມສາມາດປຸກລະດົມ ແລະ ເຕົ້າໂຮມຄວາມສາມັກຄີ ແລະ ນ້ຳໃຈຮັບໃຊ້ປະຊາຊົນ, ມີແບບແຜນດຳລົງຊີວິດປອດໃສຂາວສະອາດ;
- ສູ້ຊົນຕີລາຄາເປັນພະນັກງານ-ລັດຖະກອນປະເພດແຂງ.

3. ການຈັດຕັ້ງເຂັ້ມແຂງ

- ມີຄວາມສາມາດນຳພາດ້ານການເມືອງ-ແນວຄິດ, ການຈັດຕັ້ງ, ອົງການຈັດຕັ້ງມະຫາຊົນ ແລະ ແບບແຜນວິທີນຳພາ;
- ຊີ້ນຳ-ນຳພາການຈັດຕັ້ງປະຕິບັດວຽກງານວິຊາສະເພາະ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ນະໂຍບາຍການຕ່າງປະເທດຂອງພັກ-ລັດ;
- ເພີ່ມທະວີຄົ້ນຄວ້ານຳໃຊ້ ວິທະຍາສາດ, ເຕັກໂນໂລຊີ; ຫັນເປັນອຸດສາຫະກຳ ແລະ ທັນສະໄໝ;
- ສູ້ຊົນພັດທະນາທາງດ້ານອົງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ໃຫ້ມີຄວາມກ້າວໜ້າ ແລະ ມີຄຸນນະພາບ;
- ນຳພາເຮັດໃຫ້ການຈັດຕັ້ງມີຄວາມສະຫງົບ, ໜັກແໜ້ນ, ເຂັ້ມແຂງ, ປອດໃສ;
- ມີຄວາມສາມັກຄີເປັນປຶກແຜ່ນໃນການຈັດຕັ້ງ;
- ຮັບປະກັນໂຄງປະກອບການຈັດຕັ້ງ ທັນເປັນໜຸ່ມ, ເພດ, ເຜົ່າ, ແລະ ສ້າງພະນັກງານໄປຕາມແຜນກຳນົດພະນັກງານນຳພາ-ຄຸ້ມຄອງ

2.2. 4 ເປົ້າໝາຍ

1. ຄ້ຳປະກັນຄວາມໝັ້ນຄົງດ້ານສະບຽງອາຫານ

- ຮັບປະກັນດ້ານໂພຊະນາການ ຂອງປະຊາຊົນໃຫ້ໄດ້ຮັບພະລັງງານ ສະເລ່ຍ 2.600 ກິໂລກາລໍຣີ/ຄົນ/ມື້;
- ຮັບປະກັນການຜະລິດເຂົ້າ ລວມ 3,5-4 ລ້ານໂຕນ/ປີ, ໃນນີ້ ເພື່ອຄ້ຳປະກັນສະບຽງອາຫານ 2,5 ລ້ານໂຕນ; ສູ້ຊົນຜະລິດພືດສະບຽງອາຫານ ປະມານ 261.710 ເຮັກຕາ, ຜົນຜະລິດ 2,1 ລ້ານໂຕນ. ການລ້ຽງສັດ ແລະ ປະມົງ ສູ້ຊົນຜະລິດ ຊີ້ນ, ໄຂ່ ແລະ ປາ ໃຫ້ໄດ້ 577.000 ໂຕນ. ຂະຫຍາຍຝູງສັດ ໃຫ້ໄດ້ 3-4% ຕໍ່ປີ (ຄວາຍ 1%, ງົວ 3%, ໝູ 4%,ແກະ/ແບ້ 5% ແລະ ສັດປີກ 5%), ງົວ ໃຫ້ໄດ້ 414.000 ໂຕ ຫຼື ປະມານ 39.500 ໂຕຕໍ່ປີ, ຜະລິດຊີ້ນສັດປີກ ໃຫ້ໄດ້ໃນລະດັບ 75.000 ໂຕນຕໍ່ປີ, ໄຂ່ ໃຫ້ໄດ້ປະມານ 55.000 ໂຕນຕໍ່ປີ, ຜະລິດ ແລະ ສະໜອງລູກປາໃຫ້ບັນລຸ 70% ຂອງຄວາມຕ້ອງການ ຫຼື ປະມານ 350 ລ້ານໂຕຕໍ່ປີ;
- ຮັບປະກັນການຜະລິດກະສິກຳສະອາດ ແລະ ປອດໄພດ້ານສະບຽງອາຫານ.

2. ຜະລິດກະສິກຳ ເປັນສິນຄ້າ

- ສູ້ຊົນຜະລິດພືດ ແລະ ສັດ ເປັນສິນຄ້າສົ່ງອອກ ໃຫ້ບັນລຸ 1,2 ຕື້ໂດລາສະຫະລັດຕໍ່ປີ, ໃນນັ້ນ: ພືດໃຫ້ບັນລຸ 1,1 ຕື້ໂດລາສະຫະລັດຕໍ່ປີ ຫຼື 5,5 ຕື້ໂດລາສະຫະລັດ, ສັດ ໃຫ້ບັນລຸ 0,1 ຕື້ໂດລາສະຫະລັດຕໍ່ປີ ຫຼື 0,5 ຕື້ໂດລາສະຫະລັດ;
- ສູ້ຊົນປູກພືດເປັນສິນຄ້າ ສະເລ່ຍຕໍ່ປີໃຫ້ບັນລຸ ຄື: ເຂົ້າ ໃຫ້ໄດ້ 1 ລ້ານໂຕນ ເພື່ອເປັນສິນຄ້າຮັບໃຊ້ພາຍໃນ ແລະ ສົ່ງອອກ; ສາລີອາຫານສັດ 636.900 ໂຕນ; ກ້ວຍ 735.500 ໂຕນ; ກາເຟ ໃຫ້ໄດ້ 175.500 ໂຕນ; ມັນຕົ້ນ 3,6 ລ້ານໂຕນ ແລະ ອ້ອຍ ໃຫ້ໄດ້ 1,6 ລ້ານໂຕ;
- ສູ້ຊົນຜະລິດງົວ ເພື່ອສົ່ງອອກ ສປ ຈີນ ໃຫ້ໄດ້ 250.000 ໂຕ ຫຼື 50.000 ໂຕຕໍ່ປີ, ຜະລິດນົມງົວໃຫ້ໄດ້ 50.000 ໂຕນຕໍ່ປີ;
- ຂະຫຍາຍຝູງສັດ ຢູ່ໃນລະດັບ 3-4% ຕໍ່ປີ, ໃນນັ້ນ: ຄວາຍ 1%, ງົວ 3%, ໝູ 4%,ແກະ/ແບ້ 5% ແລະ ສັດປີກ 5%. ສະໜອງ ຊີ້ນ ແລະ ໄຂ່ ໃຫ້ໄດ້ 340.000 ໂຕນ ຫຼື ເພີ່ມຂຶ້ນ 7,8%;
- ການລ້ຽງປາ ແລະ ສັດນ້ຳ ຂະຫຍາຍ 3-4% ຕໍ່ປີ ຫຼື ສະໜອງປາ ແລະ ສັດນ້ຳ ໃຫ້ບັນລຸ 237.000 ໂຕນ ຫຼື ເພີ່ມຂຶ້ນ 8,4%;
- ສົ່ງເສີມການປູກພືດ, ປູກໄມ້ ແລະ ການລ້ຽງສັດ ແບບອຸດສາຫະກຳທັນສະໄໝ, ສະອາດ ແລະ ຍືນຍົງ;
- ສ້າງການຜະລິດກະສິກຳ ແລະ ປ່າໄມ້ ຫັນໄປສູ່ທັນສະໄໝ ນຳໃຊ້ເຕັກໂນໂລຊີໃໝ່;
- ສົ່ງເສີມການຜະລິດໃນເຂດທີ່ມີເງື່ອນໄຂ ເພື່ອຜະລິດເປັນສິນຄ້າ ພ້ອມທັງຈັດສັນເຂດການຜະລິດ;
- ພັດທະນາການປຸງແຕ່ງຜະລິດຕະພັນກະສິກຳ ແລະ ປ່າໄມ້ ເປັນຕ່ອງໂສ້ ແລະ ຄົບຊຸດ.

3. ພັດທະນາປ່າໄມ້ ແບບຍືນຍົງ

ສູ້ຊົນບັນລຸບັນດາຕົວເລກຄາດໝາຍດ້ານວຽກງານປ່າໄມ້ ດັ່ງນີ້:

- ສຳຫຼວດ ກຳນົດເຂດ ທີ່ດິນປ່າໄມ້ ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດ ຕິດພັນກັບການຄຸ້ມຄອງປົກປັກຮັກສາ ຟື້ນຟູບູລະນະ ແລະ ສົ່ງເສີມການປູກໄມ້ ເພື່ອຍົກລະດັບຄວາມປົກຫຸ້ມຂອງປ່າໄມ້ ບໍ່ໃຫ້ຫຼຸດ 70% ຂອງ ເນື້ອທີ່ທົ່ວປະເທດ;
- ຍົກລະດັບປ່າສະຫງວນແຫ່ງຊາດ ຂຶ້ນເປັນອຸທິຍານແຫ່ງຊາດ ໃຫ້ໄດ້ 5 ແຫ່ງ;
- ຟື້ນຟູປ່າ ໃນເຂດປ່າສະຫງວນ ແລະ ປ່າປ້ອງກັນໃຫ້ໄດ້ 1,8 ລ້ານເຮັກຕາ;
- ປູກໄມ້ເພື່ອເປັນສິນຄ້າ ໃນເຂດປ່າຜະລິດ ແລະ ໃນທີ່ດິນຂອງບຸກຄົນ ຫຼື ນິຕິບຸກຄົນ ໃຫ້ໄດ້ທັງໝົດ 200.000 ເຮັກຕາ, ໃນນັ້ນ ປູກເພື່ອປົກປັກຮັກສາສິ່ງແວດລ້ອມໃນປ່າສະຫງວນ ແລະ ປ່າປ້ອງກັນ ໃຫ້ໄດ້ 39.650 ເຮັກຕາ, ປູກເພື່ອເປັນສິນຄ້າໃນປ່າຜະລິດ ແລະ ດິນບຸກຄົນໃຫ້ໄດ້ 160.350 ເຮັກຕາ;
- ສົ່ງອອກຢາງພາລາ ສະເລ່ຍຕໍ່ປີໃຫ້ໄດ້ປະມານ 690.000 ໂຕນ;
- ເຈລະຈາຄ້າຂາຍກາກບອນປ່າໄມ້ ບໍ່ໃຫ້ຫຼຸດ 95 ລ້ານໂດລາສະຫະລັດ ແລະ ດຶງດູດການລົງທຶນໃຫ້ໄດ້ ຢ່າງຕໍ່າ 200 ລ້ານໂດລາສະຫະລັດ;
- ເປັນເຈົ້າການປະຕິບັດສັນຍາ ແລະ ອະນຸສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ເປັນຕົ້ນແມ່ນສົນທິສັນຍາສາກົນ CITES ຢ່າງເຂັ້ມງວດ ແນໃສ່ຢຸດຕິການຄ້າຂາຍ, ການນຳເຂົ້າສົ່ງອອກ ຫຼື ສົ່ງຜ່ານສັດປ່າ ແລະ ພືດປ່າ ທີ່ຫາຍາກໃກ້ຈະສູນພັນ ແລະ ບໍ່ສອດຄ່ອງກັບກົດໝາຍສາກົນ;
- ຈັດຕັ້ງປະຕິບັດລະບຽບກົດໝາຍໃນຂົງເຂດວຽກງານປ່າໄມ້ ແລະ ເພີ່ມທະວີຄວາມສັກສິດຂອງກົດໝາຍ.

4. <u>ຊົນນະບົດພັດທະນາ</u>

- ສູ້ຊົນສ້າງຄອບຄົວພົ້ນທຸກ ໃຫ້ໄດ້ ຈຳນວນ 204.360 ຄອບຄົວ;
- ສ້າງບ້ານພົ້ນທຸກ ໃຫ້ໄດ້ 3.104 ບ້ານ;
- ສ້າງເມືອງພົ້ນທຸກ ໃຫ້ໄດ້ 69 ເມືອງ;
- ສູ້ຊົນສ້າງຄອບຄົວພັດທະນາ ໃຫ້ໄດ້ 245.754 ຄອບຄົວ;
- ສ້າງບ້ານພັດທະນາ ໃຫ້ໄດ້ 4.420 ບ້ານ;
- ສ້າງບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດ ໃຫ້ໄດ້ ຈຳນວນ 10 ບ້ານ;
- ຈັດສັນພູມລຳເນົາຄົງທີ່ ແລະ ອາຊີບທີ່ໝັ້ນຄົງ ໃຫ້ປະຊາຊົນ ຢູ່ 25 ຈຸດສຸມ;
- ສ້າງສະຫະກອນການຜະລິດ ແລະ ບໍລິການກະສິກຳ ແລະ ປ່າໄມ້ ໃຫ້ໄດ້ 18 ຫົວໜ່ວຍ.

**ມາດຕາ 3 ວິທີຈັດຕັ້ງປະຕິບັດ**

3.1. ມອບໃຫ້ ຄະນະພັກ, ຄະນະກົມ, ຫ້ອງການ, ສະຖາບັນ, ສູນ, ກອງທຶນ, ວິທະຍາໄລກະສິກຳ ແລະ ປ່າໄມ້ ແລະ ໂຮງຮຽນຊົນລະປະທານຊັ້ນສູງ ທ່າງ່ອນ ຈັດຕັ້ງເຜີຍແຜ່, ເຊື່ອມຊຶມບັນດາເນື້ອໃນຂໍ້ແຂ່ງຂັນນີ້ ໃຫ້ພະນັກງານ-ລັດຖະກອນ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ

ຮັບຊາບ ແລະ ເຂົ້າໃຈ ເພື່ອເປັນບ່ອນອີງໃຫ້ແກ່ການວາງແຜນໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະແຕ່ລະຄົນ;

3.2. ຄະນະພັກ, ຄະນະກົມ, ຫ້ອງການ, ສະຖາບັນ, ສູນ, ກອງທຶນ, ວິທະຍາໄລກະສິກຳ ແລະ ປ່າໄມ້ ແລະ ໂຮງຮຽນຊົນລະປະທານຊັ້ນສູງ ທ່າງ່ອນ ຕ້ອງຜັນຂະຫຍາຍບັນດາເນື້ອໃນຈິດໃຈຂອງຂໍ້ແຂ່ງຂັນນີ້ ເຂົ້າໃນວຽກງານວິຊາສະເພາະຂອງຕົນ ໂດຍຫັນເປັນແຜນການລະອຽດແຕ່ລະໄລຍະ;

3.3. ພະນັກງານ-ລັດຖະກອນ ທຸກຄົນ ໃຫ້ຖືເອົາບັນດາເນື້ອໃນຂໍ້ແຂ່ງຂັນນີ້ ເປັນທິດທາງໃນການປະຕິບັດໜ້າທີ່ ແລະ ພັດທະນາຕົນເອງ;

3.4. ໃຫ້ ຫ້ອງການ, ບັນດາກົມ, ບັນດາສະຖາບັນ, ບັນດາສູນ, ກອງທຶນ, ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້, ໂຮງຮຽນຊົນລະປະທານຊັ້ນສູງ ທ່າງ່ອນ ສະຫຼຸບຜົນການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນດັ່ງກ່າວໃຫ້ຂັ້ນເທິງເປັນແຕ່ລະໄລຍະ ເພື່ອໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີ

ປອ. ເພັດ ພົມພິພັກ

ບ່ອນນຳສົ່ງ:

1. ທ່ານລັດຖະມົນຕີ, ຮອງລັດຖະມົນຕີ ກປ ທ່ານລະ 1 ສະບັບ
2. ກະຊວງພາຍໃນ 1 ສະບັບ
3. ຫ້ອງການ, ບັນດາກົມ, ບັນດາສະຖາບັນ, ບັນດາສູນ, ກອງທຶນ, ວິທະຍາໄລ ກປ, ໂຮງຮຽນຊົນລະປະທານຊັ້ນສູງ ທ່າງ່ອນ ພາກສ່ວນລະ 1 ສະບັບ
4. ເກັບມ້ຽນ 1 ສະບັບ